# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 26 ຕຸລາ 2008 (10-26-2008)

---

## <u>ພຣະວິນຍານບໍຣິສຸດສຳຄັນຕໍ່ຊີວິດທີ່ບໍຣິສຸດ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ໂຣມ 8:5-17, 26-27)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?</u>**: ທ່ານໂປໂລໄດ້ຄົ້ນພົບຄຳຕອບຊີວິດຝ່າຍຈິດວິນຍານທີ່ມີການຕໍ່ສູ້ໃນການທຳງານຂອງພຣະວິນຍານບໍຣິສຸດໃນຊີວິດຂອງລາວ, ພຣະວິນຍານບໍຣິສຸດໄດ້ນຳພາຄວາມຄິດຄວາມຕັ້ງໃຈໃຫ້ດຳຣົງຊີວິດຢູ່ໃນຄວາມບໍຣິສຸດ. ເຕືອນສະຕິທ່ານໃຫ້ດຳຣົງຊີວິດທີ່ຊອບພຣະທັຍພຣະເຈົ້າ, ແລະຊ່ອຍທ່ານໃນການອ້ອນວອນ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?</u>**:
ມີຄຣິສຕຽນຫລາຍຄົນພຍາຍາມດຳເນີນຊີວິດຄຣິສຕຽນດ້ວຍກຳລັງຂອງຕົນເອງ, ຊຶ່ງນຳໄປສູ່ຄວາມຜ່າຍແພ້. ຜູ້ທີ່ເຊື່ອຕ້ອງໃຫ້ພຣະວິນຍານບໍຣິສຸດທຳງານຕາມທີ່ພຣະອົງຊົງໄດ້ປ່ຽນແປງຄວາມຄິດຂອງເຂົາ, ເຂົາຕ້ອງຍອມໃຫ້ພຣະວິນຍານເພີ້ມພລັງໃນການດຳເນີນຊີວິດຂອງເຂົາ. ເຂົາຕ້ອງຍອມໃຫ້ໃຫ້ພຣະວິນຍານຊ່ອຍ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?</u>**:
ບົດຮຽນນີ້ຈະຊ່ອຍໃຫ້ທ່ານດຳເນີນຊີວິດຢ່າງບໍຣິສຸດໄດ້ໂດຍການເອົາໃຈໃສ່ໃນສິ່ງທີ່ເປັນຝ່າຍພຣະວິນຍານຂອງພຣະເຈົ້າແທນທີ່ຈະມົວສຸມໃຈໃສ່ໃນສິ່ງທີ່ເປັນຄວາມປາຖນາຂອງຕົນເອງ, ເພື່ອໃຫ້ເປັນທີ່ຊອບພຣະທັຍຂອງພຣະອົງ ແລະມີຊີວິດຢູ່ເພື່ອພຣະອົງ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ</u>**:

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ</u>**: ພວກເຮົາມີບາງຄົນທີ່ສາມາດນຳພາພວກເຮົາຜ່ານຈາກອຸປສັກທີ່ພວກເຮົາປະເຊີນໄດ້ບໍ່?
ທ່ານສົມຄວນຈະຈ່າຍຜູ້ນຳພານັ້ນເທົ່າໃດ?
ຖ້າຫາກຜູ້ນຳພາບໍ່ໄດ້ຮຽກຮ້ອງເອົາຄ່າແຕ່ຢ່າງໃດເລີຍ ແລະພ້ອມທີ່ຈະຊ່ອຍທ່ານຢູ່ດຽວນີ້ ນັ້ນຄືຜູ້ໃດ?

**1. <u>ພຣະວິນຍານຂອງພຣະເຈົ້າປ່ຽນ ຄວາມຄິດຂອງພວກເຮົາ:</u>** (ໂຣມ 8:5-9)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 8:5-9
- ໃນບົດຮຽນຂອງພວກເຮົາອາທິດແລ້ວນີ້, ທ່ານໂປໂລໄດ້ຊີ້ໃຫ້ເຫັນວ່າຄຣິສຕຽນໄດ້ຕໍ່ສູ້ (ປຸກປ້ຳ)ກັບພລັງອິດທິພົນຂອງຄວາມບາບ.
- ອ່ານພຣະທັມ ໂຣມ 8:7-8, ວ່າແມ່ນຫຍັງທີ່ໂປໂລໄດ້ຊີ້ແຈງ ເຖິງ "ສັດຕຣູຂອງພຣະເຈົ້າ" ແລະ ຜົນທີ່ຕາມເຂົ້າມາໃນຄວາມຄິດ. ແລ້ວອ່ານ ຂໍ້ທີ 9. ຫ້າຫາກພຣະວິຍານບໍຣິສຸດສະຖິດຢູ່ໃນເຮົາ, ແມ່ນຫຍັງທີ່ທຳໃຫ້ພວກເຮົາຄິດ ແລະກະທຳເໝືອນກັບພວກເຮົາບໍ່ແມ່ນຄຣິສຕຽນ?
- ພວກເຮົາຈະຫລີກເວັ້ນຈາກຄວາມຄິດຢ່າງນັ້ນໄດ້ແນວໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ໂຣມ 8:5-9)

1. ຄົນທີ່ທ່ານຮູ້ຈັກນັ້ນສ່ວນຫລາຍເຂົາໄດ້ຄິດເຖິງເຣື່ອງຫຍັງຫລາຍທີ່ສຸດ? ທ່ານຮູ້ໄດ້ແນວໃດ?
2. ທ່ານສາມາດບອກເຂົາໄດ້ບໍ່ວ່າເຂົາໄດ້ສຸມແນວຄິດຂອງເຂົາໂດຍການກະທຳ ຫລື ທ່າທາງຂອງເຂົາເປັນແນວໃດ?
3. ໃນເມື່ອພວກເຮົາຕ້ອນຮັບເອົາພຣະເຢຊູຄຣິດແລ້ວພວກເຮົາໄດ້ມີສິດເສຣີພາບໂດຍບໍ່ຈຳກັດຢູ່ບໍ່?

**2. <u>ພຣະວິນຍານຂອງພຣະເຈົ້າເພີ້ມພລັງໃຫ້ແກ່ພວກເຮົາ:</u>** (ໂຣມ 8:10-13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 8:10-13
- ຜູ້ຄຸ້ມຄອງຮັກສາຊີວິດ ແລະພຣະຄັມພີຄືກັນບໍ່? ມັນມີຄວາມແຕກຕ່າງກັນແນວໃດ?
- ເພາະວ່າພຣະວິນຍານບໍຣິສຸດສະຖິດຢູ່ນຳ ແລະທຳງານໃນເຮົາ, ພວກເຮົາບໍ່ມີຂໍ້ແມ້ສຳລັບການດຳເນີນຊີວິດຕາມຝ່າຍເນື້ອໜັງ.ສເນີໃຫ້ນັກຮຽນຮູ້ວ່າພຣະວິນຍານບໍຣິສຸດໄດ້ຊ່ອຍພວກເຮົາຕໍ່ສູ້ກັບຊາຕານ.
- ພຣະວິນຍານບໍຣິສຸດໄດ້ຊ່ອຍພວກເຮົາຕໍ່ສູ້ປ້ອງກັນຈາກການທົດລອງ ຫລອກລວງຕ່າງ ໆ ໃນແຕ່ລະວັນ.
- ພຣະເຈົ້າໄດ້ຊົງຮຽກເອີ້ນຄຣິສຕຽນທຸກຄົນໃຫ້ເຮັດຫຍັງ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ໂຣມ 8:10-13

1. ພວກເຮົາຈະຮູ້ໄດ້ແນວໃດວ່າພຣະເຈົ້າເວົ້າກັບເຮົາ?
2. ພວກເຮົາຈະໄດ້ຍິນສຽງຂອງພຣະເຈົ້າໄດ້ແນວໃດ?
3. ພວກເຮົາຈະໄດ້ຮັບການຊ່ອຍເຫລືອໃຫ້ພົ້ນຈາກບາບ ແລະການຫລອກລວງໄດ້ແນວໃດ?
4. ເປັນດ້ວຍເຫດໃດທ່ານໂປໂລຈຶ່ງເວົ້າວ່າ ການດຳເນີນຊີວິດຝ່າຍເນື້ອໜັງ ຈະນຳໄປເຖິງຄວາມຕາຍ?
5. ທ່ານໂປໂລໝາຍຄວາມວ່າແນວໃດ?

**3. <u>ພຣະວິນຍານຂອງພຣະເຈົ້າຢືນຢັນວ່າພວກເຮົາເປັນລູກຂອງພຣະອົງ:</u>** (ໂຣມ 8:14-17)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 8:14-17
- ຖ້າພວກເຮົາບໍ່ຍອມຮັບພຣະວິນຍານບໍຣິສຸດຂອງພຣະເຈົ້າແລ້ວ ພວກເຮົາກໍຍັງເປັນຂອງພຣະອົງຢູ່ບໍ່?
- ຂຽນຄຳວ່າ "ເສຣີພາບ" ໃສ່ກະດານ ແລ້ວໃຫ້ນັກຮຽນອະທິບາຍໃຫ້ໄດ້ໃຈຄວາມຢ່າງແຈ່ມແຈ້ງໃນເຣື່ອງເສຣີພາບນີ້. ຄຳຖາມຄື: ເປັນດ້ວຍເຫດໃດຄົນທັງຫລາຍຈຶ່ງໃຊ້ສິດເສຣີພາບນີ້ຜິດພ້ຽນໄປ?

ສິດເສຣີນັ້ນໝາຍຄວາມວ່າເຮົາຢາກເຮັດ ຢາກທຳແນວໃດກໍໄດ້ຕາມໃຈທີ່ເຮົາຢາກເຮັດຢາກທຳບໍ່?

- ໃນການອ້າງອີງຂອງທ່ານໂປໂລທີ່ໄດ້ອ້າງອີງເຖິງ "ອັບບາ" ນັ້ນທ່ານໄດ້ມອງເຫັນຊຶ່ງພຣະເຈົ້າໃຫ້ທ່ານເອີ້ນບາງຄົນເປັນພໍ່ໄດ້ເຊັ່ນ ໃນຄອບຄົວເຮົາກໍມີພໍ່ແມ່ນບໍ່?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ໂຣມ 8:14-17

1. ຖ້າຫາກພຣະຄຣິດໄດ້ຊົງປົດປ່ອຍພວກເຮົາແລ້ວ ພວກເຮົາໄດ້ເປັນໜີ້ພຣະອົງບໍ່? ເພາະເຫດໃດ?
2. ຄົນທັງຫລາຍໄດ້ທຳຜິດຕໍ່ເສຣີພາບຂອງພຣະເຢຊູຄຣິດຢ່າງໃດແດ່?
3. ພວກເຮົາຄວນຈະໃຫ້ຄົນຜູ້ທີ່ຮຽກວ່າຕົນເປັນຄົນທີ່ມີຄວາມເຊື່ອທີ່ກະທຳຊຶ່ງທີ່ບໍ່ຄວນທຳໃຫ້ມີຄວາມຮັບຜິດຊອບ ແລະນິສັຍອັນຖືກຕ້ອງໄດ້ແນວໃດ?
4. ເປັນຫຍັງຄົນດີຈຶ່ງໄດ້ຮັບຄວາມທໍຣະມານ?
5. ໃນເມື່ອຄຣິສຕຽນຄົນນຶ່ງຄົນໃດໄດ້ຮັບຄວາມທຸກທໍຣະມານທ່ານມີຄວາມຮູ້ສຶກແນວໃດ?

**4. <u>ພຣະວິນຍານຂອງພຣະເຈົ້າຊ່ອຍພວກເຮົາໃນການອະທິຖານ:</u>** (ໂຣມ 8:26-27

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຣມ 8:26-27
- ຊຽນ ໃນຄວາມເຊື່ອຂອງພວກເຮົາໃນພຣະບຸດນັ້ນ, ພວກເຮົາສາມາດໄປເຖິງພຣະບິດາໄດ້ໂດຍຜ່ານທາງການທຳງານຂອງພຣະວິນຍານຣິສຸດ.ຄຣິສຕຽນບໍ່ຄວນຫລີກເວັ້ນການອະທິຖານ.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u>

1. ພວກເຮົາສາມາເວົ້າກັບພຣະເຈົ້າໄດ້ເໝືອນກັບພວກເຮົາເວົ້າກັບພໍ່ຂອງພວກເຮົາໄດ້ບໍ່?
2. ທ່ານຄິດວ່າ "ອັບບາ" ມີຄວາມໝາຍແນວໃດ?
3. ເປັນຫຍັງພຣເຈົ້າຈຶ່ງຍົກເອົາບາບ ແລະການລໍ້ລວງອອກຈາກຊີວິດຄຣິສຕຽນ?
4. ພຣະວິນຍານບໍຣິສຸດທຳງານໃນຊີວິດ ແລະຊ່ອຍການອະທິຖານຂອງພວກເຮົາແນວໃດ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ພຣະວິຍານບໍຣິສຸດໄດ້ຊົງປ່ຽນແປງແນວຄິດຈິດໃຈຂອງຜູ້ທີ່ເຊື່ອທັງຫລາຍ.
- ພຣະວິນຍານບໍຣິສຸດນຳພາຜູ້ທີ່ເຊື່ອໃຫ້ດຳເນີນຊີວິດທີ່ດີເໜືອອຳນາດແຫ່ງຄວາມບາບໄດ້.
- ພຣະວິນຍານບໍຣິສຸດໄດ້ກອບກູ້ເອົາບັນດາຜູ້ທີ່ເຊື່ອເຂົ້າມາຢູ່ໃນຄອບຄົວຂອງພຣະເຈົ້າ.
- ພຣະວິນຍານບໍຣິສຸດເຮັດໃຫ້ຄຳອະທິຖານຂອງຜູ້ທີ່ເຊື່ອມີພລັງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**